ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ 11 / ຈຂ.ຊຂ

ຊຽງຂວາງ, ວັນທີ 08.05.2017

# ຄຳສັ່ງ

## ວ່າດ້ວຍການແກ້ໄຂບັນຫາຂຸດຄົ້ນແຮ່ຄຳ ທີ່ບໍ່ຖືກຕ້ອງຕາມ ລະບຽບກົດໝາຍຢູ່ຕາມຈຸດຕ່າງ ໆ ຂອງທຸກເມືອງ ໃນທົ່ວແຂວງຊຽງຂວາງ

ເຖິງ: ຄະນະພັກ, ອຳນາດການປົກຄອງ, ກຳລັງປ້ອງການຊາດ, ປ້ອງກັນຄວາມສະຫງົບທຸກຂັ້ນ, ທົ່ວໜ່ວຍທຸລະກິດທຸກພາກສ່ວນ ຕະຫຼອດຮອດປະຊາຊົນ ບັນດາເຜົ່າໃນທົ່ວແຂວງ ແລະ ຊາວຕ່າງດ້າວ ທີ່ເຄື່ອນໄຫວທຳມາຫາກິນຢູ່ພາຍໃນແຂວງຊຽງຂວາງ.

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ ກົດໝາຍ ວ່າດ້ວຍອາຍາ ສະບັບເລກທີ 12/ສພຊ, ລົງວັນທີ 09 ພະຈິກ 2015.
- ອີງຕາມ ບົດບັນທຶກ ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ສະບັບລົງວັນທີ 10 ເມສາ 2017.
- ອີງຕາມ ຄວາມເປັນຈິງກ່ຽວກັບການສະກັດກັ້ນ ແລະ ແກ້ໄຂ ຕໍ່ບຸກຄົນ, ກຸ່ມຄົນ ທີ່ລັກລອບຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແຕ່ປີ 2006 ມາເຖິງປະຈຸບັນ. ຕະຫຼອດໄລຍະທີ່ຜ່ານມາ ເຖິງວ່າຄະນະພັກ ແລະ ອຳນາດການປົກຄອງແຂວງ ໄດ້ເອົາໃຈໃສ່ ແກ້ໄຂບັນຫາດັ່ງກ່າວ ດ້ວຍຫຼາຍຮູບການ ເຊັ່ນ: ໄດ້ອອກນິຕິກຳລຸ່ມກົດໝາຍ, ຫຼາຍມາດຕາການແກ້ໄຂ, ນັບທັງການໂຄສະນາ, ສຶກສາອົບຮົມ, ຊີ້ແຈງອະທິບາຍ ຜົນຮ້າຍອັນຕະລາຍຕ່າງໆ ທີ່ຫັດກຸມປານໃດກໍ່ຕາມ ບັນຫາດັ່ງກ່າວກໍ່ຍັງສືບຕໍ່ແຜ່ລາມກ້ວາງອອກຕື່ມ ນັບທັງຂອບເຂດຈຸດຂຸດຄົ້ນ ແລະ ການປຸງແຕ່ງ, ຊຶ່ງເຮັດໃຫ້ເກີດມີຫຼາຍປະກົດການຫຍໍ້ທໍ້ເຊັ່ນ: ດ້ານສະພາບແວດລ້ອມ ຈາກສານພິດ ສະກັດແຮ່ຄຳ ລົງສູ່ບັນດາແຫຼ່ງນ້ຳຕ່າງ ໆ, ປະຊາຊົນເຈັບເປັນລົ້ມຕາຍ, ປ່າໄມ້ຖືກທຳລາຍ, ດິນເຊາະເຈື່ອນ, ກະທົບເຖິງແຫຼ່ງນ້ຳກິນ-ນ້ຳໃຊ້, ເກີດມີຄວາມຂັດແຍ່ງ, ມີຫາງສຽງໃສ່ຮ້າຍປ້າຍສີລະແວງສົງໄສ ໃນກຸ່ມຄົນຕ່າງ ໆ, ການຕົວະຕົ້ມຫຼອກລວງ ແລະ ບັນຫາອື່ນ ໆ ທັງໝົດເຫຼົ່ານັ້ນ ກາຍເປັນພາບພົດ ຄວາມບໍ່ສະຫງົບທາງການເມືອງ ແລະ ການປົກຄອງຢູ່ທ້ອງຖິ່ນພວກເຮົາ. ໄລຍະມໍ່ ໆ ມານີ້ ຍັງມີ ກຸ່ມຄົນ ທີ່ມີທັງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ປະຊາຊົນ ຢູ່ພາຍໃນແຂວງ-ຕ່າງແຂວງ ແລະ ຊາວຕ່າງດ້າວຈຳນວນໜຶ່ງ ຍັງສືບຕໍ່ຂຸດຄົ້ນ, ນຳໃຊ້ສານເຄມີສະກັດເອົາຄຳ ຊຶ່ງການກະທຳດັ່ງກ່າວ ເປັນການລະເມີດກົດໝາຍ, ສ້າງຄວາມເສຍຫາຍ

ໃຫ້ແກ່ສິ່ງແວດລ້ອມ, ຊີວິດ, ສຸຂະພາບ, ຊັບສົມບັດ, ສັດລ້ຽງ ຢ່າງຮ້າຍແຮງ ໃນສະເພາະໜ້າ ແລະ ຍາວນານ.

ດັ່ງນັ້ນ, ເຫັນວ່າການຢຸດຕິ ຂຸດຄົ້ນ-ປຸງແຕ່ງແຮ່ຄຳ ທີ່ບໍ່ຖືກຕ້ອງ ເປັນວຽກທີ່ເລັ່ງຮ້ອນ, ຫຼໍ່ແຫຼມ ມີຄວາມຈຳເປັນຢ່າງພາວະວິໄສ ຕ້ອງໄດ້ແກ້ໄຂ ຮີບດ່ວນ ແລະ ຂາດຕົວ ເພື່ອໃຫ້ສັງຄົມມີຄວາມສະຫງົບ, ບ້ານເມືອງມີສະພາບແວດລ້ອມທີ່ດີ ຮັບປະກັນບໍ່ໃຫ້ເກີດປະກົດການຫຍໍ້ທໍ້ ແລະ ຄວາມເສຍຫາຍ ຈາກຜົນສະທ້ອນຂ້າງເທິງນັ້ນ.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ອຳນາດການປົກຄອງເມືອງທຸກ ໆ ເມືອງ, ພະນັກງານກໍ່ສ້າງຮາກຖານ, ອຳນາດການປົກຄອງບ້ານ ແລະ ຕຳຫຼວດກຸ່ມບ້ານ ສືບຕໍ່ຕິດຕາມ, ກວດກາ, ສຶກສາອົບຮົມ, ຊີ້ແຈງອະທິບາຍ ຜົນເສຍຫາຍຂອງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຢູ່ໃນຂອບເຂດການຄຸ້ມຄອງຂອງຕົນເຊັ່ນ: ຈຸດຂຸດຄົ້ນ, ຈັກບົດ, ອ່າງແຊ່, ສານເຄມີກັກກັນ, ການເກັບຄ່າບໍລິການຕ່າງ ໆ ທີ່ບໍ່ຖືກຕ້ອງ, ມີການແອບອ້າງຊື່ຜູ້ອື່ນ, ໃຊ້ຄວາມຮຸນແຮງ, ຊຸກເຊື່ອງ, ທຳລາຍ, ປອມແປງເອກະສານ, ລາຍງານບໍ່ຖືກຄວາມຈິງ ໃຫ້ຢຸດຕິຢ່າງຂາດຕົວ ຖ້າຜູ້ໃດບໍ່ໃຫ້ການຮ່ວມມືກັບເຈົ້າໜ້າທີ່ກວດກາ ໃຫ້ດຳເນີນຄະດີຕາມກົດໝາຍ.

2. ມອບໃຫ້ເຈົ້າໜ້າທີ່ ປ້ອງກັນຄວາມສະຫງົບທຸກຂັ້ນ ຕິດຕາມກວດກາ ບຸກຄົນ, ກຸ່ມຄົນ ທີ່ເຄື່ອນໄຫວກ່ຽວກັບແຮ່ຄຳຜິດກົດໝາຍເຊັ່ນ: ການເຄື່ອນຍ້າຍ, ຂົນສົ່ງ, ຄ້າຂາຍ, ຈັກບົດ, ອ່າງແຊ່ນ້ຳຢາເຄມີ ແລະ ອຸປະກອນປະກອບ ການຜະລິດປຸງແຕ່ງແຮ່ຄຳ ຢູ່ໃນການຄຸ້ມຄອງຂອງຕົນເອງ ໂດຍບໍ່ຖືກຕ້ອງ ໃຫ້ນຳໃຊ້ມາດຕະການທາງກົດໝາຍຢ່າງເດັດຂາດ ໂດຍບໍ່ມີຂໍ້ອ້າງ ແລະ ເງື່ອນໄຂໃດ ໆ.

3. ໃຫ້ກອງບັນຊາການທະຫານແຂວງ, ທະຫານເມືອງທຸກ ໆ ເມືອງ ຈັດຕັ້ງກຳລັງ ຄຸ້ມຄອງ, ກວດກາ, ເວນຍາມ, ສະກັດກັ້ນປະຊາຊົນ ແລະ ກຸ່ມຄົນ ເຂົ້າໄປບຸກລຸກຂຸດຄົ້ນເອົາແຮ່ຄຳ ຢູ່ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ ແລະ ເດັດຂາດ.

4. ໃຫ້ພະແນກສາທາລະນະສຸກ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເອົາໃຈໃສ່ໂຄສະນາ ອະທິບາຍຜົນຮ້າຍຕໍ່ຊີວິດຂອງຄົນ ແລະ ສັດລ້ຽງ ຈາກການນຳໃຊ້ສານພິດເຄມີ ປຸງແຕ່ງແຮ່ຄຳ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ.

5. ໃຫ້ເຈົ້າໜ້າທີ່ ກວດກາສິນຄ້າ ຢູ່ບັນດາດ່ານສາຍແດນ ແລະ ຈຸດກວດກາຕ່າງ ໆ ຕ້ອງເອົາໃຈໃສ່ກວດກາຢ່າງເຂັ້ມງວດ ຕໍ່ວັດຖຸອຸປະກອນ, ສານເຄມີທຸກປະເພດ ທີ່ນຳໃຊ້ເຂົ້າໃນການປຸງແຕ່ງແຮ່ຄຳ, ຖ້າຫາກມີການພົບເຫັນ ໃຫ້ຢຶດເພື່ອສະເໜີຕໍ່ເຈົ້າໜ້າທີ່ ດຳເນີນຄະດີຕາມລະບຽບກົດໝາຍ.

6. ໃຫ້ທຸກ ໆ ເມືອງ, ບ້ານ, ກົມກອງກຳລັງ ປກຊ, ປກສ ແລະ ບັນດາພະແນກການ ຈົ່ງເຜີຍແຜ່ແນະນຳ ໃຫ້ພະນັກງານ - ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຮັບຮູ້, ຊາບຊຶ້ມ

39

ຢ່າງທົ່ວເຖິງ ພ້ອມທັງຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ. ພາຍຫຼັງທີ່ໄດ້ຈັດຕັ້ງການເຜີຍແຜ່ແລ້ວ. ຖ້າຍັງມີ ພະນັກງານສັງກັດລັດຜູ້ໃດ ເຂົ້າຮ່ວມດຳເນີນກິດຈະກຳແຮ່ຄຳ ທີ່ຜິດກົດໝາຍເຊັ່ນ: ຂຸດຄົ້ນ-ປຸງແຕ່ງ, ຮັບສິນບົນ, ອຳນວຍຄວາມສະດວກ ຫຼື ໃຫ້ສະມາຊິກຄອບຄົວ ແລະ ຍາດຕິພີ່ນ້ອງຂອງຕົນດຳເນີນ ຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີຄື: ຕິຕຽນ, ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ - ຂັ້ນເງິນເດືອນ, ການຍ້ອງຍໍ, ປົດຕຳແໜ່ງ, ຍົກຍ້າຍໜ້າທີ່, ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດ ໆ ແລະ ໃຫ້ບັນທຶກເຂົ້າປະຫວັດສຳນວນເອກະສານຂອງຜູ້ກ່ຽວ. ສຳລັບພະແນກການກົມກອງ ແລະ ອົງການຈັດຕັ້ງຂອງລັດ. ຖ້າຍັງມີພະນັກງານ-ລັດຖະກອນ ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມການເຄື່ອນໄຫວແຮ່ຄຳທີ່ຜິດກົດໝາຍນີ້ ຖືວ່າການນຳຂອງພະແນກການ, ກົມກອງນັ້ນບໍ່ປະຕິບັດຄຳສັ່ງ, ມີຄວາມບົກຜ່ອງຕໍ່ໜ້າທີ່ຈະຕ້ອງໄດ້ພິຈາລະນາ ແລະ ມີການປັບປຸງ.

7. ໃຫ້ທຸກເມືອງ ຮີບຮ້ອນ, ຈັດຕັ້ງຄະນະໜຶ່ງ ຮັບຜິດຊອບຊີ້ນຳສະເພາະໂດຍກົງ ເພື່ອຕິດຕາມ, ກວດກາການຈັດຕັ້ງປະຕິບັດ ເນື້ອໃນຄຳສັ່ງສະບັບນີ້ ຢູ່ໃນທົ່ວເມືອງຂອງຕົນ. ພ້ອມທັງມີການສ່ອງແສງລາຍງານ ໃຫ້ຫ້ອງວ່າການປົກຄອງແຂວງຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດ ຫາກມີບັນຫາໃດຫຍຸ້ງຍາກ ໃຫ້ຮີບຮ້ອນລາຍງານຂັ້ນເທິງ ເພື່ອຊີ້ນຳ ແລະ ແກ້ໄຂທັນເວລາ.

8. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ສ່ວນຄຳສັ່ງຕ່າງ ໆ ຂອງແຂວງ ກ່ອນກັບການແກ້ໄຂແຮ່ຄຳຜ່ານມານັ້ນ ຫາກມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ເຊັນແທນ ເຈົ້າແຂວງ

ດຣ. ຄຳປາວ
Dr. Khampao

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ເມືອງລະ 1 ສະບັບ | 7 ສະບັບ. |
| 2. ກອງບັນຊາການ ປກຊ | 1 ສະບັບ. |
| 3. ກອງບັນຊາການ ປກສ | 1 ສະບັບ. |
| 4. ຫ້ອງວ່າການປົກຄອງແຂວງ | 1 ສະບັບ. |
| 5. ພະແນກຂອງແຂວງລະ 1 ສະບັບ | 18 ສະບັບ. |
| 6. ສຳເນົາ | 1 ສະບັບ. |